ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento. CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www. Laofreedom.com

ສູນກາງຕາງໜ້າ
ພັກແລະກຳລັງທັບເສຣີປະຊາທິປະໄຕລາວ
* ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.
ເລກທີ 1001 /ປພຖຂ/081518.

# ແຈ້ງການດ່ວນ.

**ເຖິງ**: ທ່ານ ທອງລຸນ ສີສຸລິດ, ນາຍົກຣັຖມົນຕຣີ ສປປລາວ, ຕາງໜ້າຣັຖບານ.
**ເຣື້ອງ**: ກຸ່ມຄົນບໍ່ດີ ໃນຄນະຣັຖບານ, ລັກຂາຍແຮ່ທາດ ໃຫ້ ຈີນ.

ພວກເຮົາ ປະຊາຊົນພັກ ເສຣີປະຊາທິປະໄຕລາວ, ອອກແຈ້ງການດ່ວນ ສບັບນີ້: ເຖິງທ່ານ ນາຍົກຣັຖມົນຕຣີ ໃຫ້ຕິດຕາມ ເອົາກຸ່ມຄົນບໍ່ດີ ໃນຄນະພັກຣັຖບານ ທີ່ລັກຂາຍທາຕແຮ່ ເບີໄຣສ໌ ໃນເຂດບ້ານ ຜາເຈົ້າ, ເມືອງ ກາສີ, ແຂວງວຽງຈັນ ມາດຳເນີນຄະດີ.

ປະຈຸບັນນີ້, ມີຣົດມາລໍຖ້າ ຂົນແຮ່ທາຕ ແຕ່ວັນທີ 13 ມິຖຸນາ 2018. ດຽວນີ້, ຍັງລໍຖ້າເອກສານ ອະນຸຍາດສົ່ງອອກ. ຣົດ ຈອດໄວ້ທັງສອງຂ້າງທາງ, ແຕ່ ນາແດນ ເຖິງ ກາສີ ຫລາຍກວ່າ 150 ຄັນ. ໃສ່ປ້າຍປອມ ຊຽນເອົາເອງ “**ບໍລິຄຳໄຊ**”. ຣົດທັງຫມົດ ມາຈາກ ໄຣຟອງ ປະເທດ ວຽດນາມ ເພື່ອ ຂົນແຮ່ທາຕອອກໄປ, ພາຍໃຕ້ຊື່ບໍຣິສັທ **Lao China Base**. ບໍຣິສັທນີ້, ບໍ່ມີຕົນມີຕົວ ໃສ່ຊື່ລູກຫລານ ເປັນ ນໍມີນີ; ຈັດຕັ້ງຂຶ້ນ ເພື່ອຮັບໃຊ້ເປົ້າຫມາຍສະເພາະອັນໃດອັນນຶ່ງ. ຫລັງຈາກສຳເຣັດວຽກແລ້ວ ກໍຍຸບຖິ້ມ; ແລ້ວ, ຕັ້ງໃຫມ່ຂຶ້ນ ເພື່ອເປົ້າຫມາຍອັນໃຫມ່ ຕໍ່ໆໄປ.

ແຮ່ທາຕ ຊນິດນີ້, ຂາຍຢູ່ຕລາດທົ່ວໄປ ຣາຄາ 180 ເຖິງ 200 ດອນລາສະຫະຣັດ ຕໍ່ ນຶ່ງຕັນ. ຖ້າເປັນແຮ່ລ້ວນໆ ຣາຄາຕົກຢູ່ ນຶ່ງກິໂລກຣາມ ຕໍ່ ນຶ່ງຮ້ອຍດອນລາສະຫະຣັດ.

ຖ້າຣົດໄຟຄວາມໄວສູງ **ລາວ-ຈີນ** ສຳເຣັດ; ພວກຈີນ ກໍຍິ່ງຈະຄ້າມະນຸດ, ຄ້າສັດປ່າທີ່ຫວງຫ້າມ ແລະລັກລອບເອົາຊັພຍາກອນທັມຊາດຂອງລາວ ໄດ້ສດວກ ແລະຫລາຍຂຶ້ນຕື່ມອີກ.

ພວກເຮົາ ຂໍຮຽກຮ້ອງມາຍັງເຄື່ອຂ່າຍ ອົງການຕ້ານການ ສໍ້ຣາດ-ບັງຫລວງ ສາກົນ, ອົງການຮັກ ສາສະພາບແວດລ້ອມສາກົນ, ອົງການພັທນາສິຊຽວສາກົນ ແລະ ພີ່ນ້ອງປະຊາຊົນລາວ ທັງມວນ ຈົ່ງໄດ້ ພ້ອມກັນ ກ່າວປະນາມເລັ່ງທວງ ແລະຮຽກຮ້ອງ ໃຫ້ຣັຖບານ ຂອງທ່ານ ທອງລຸນ ສີສຸລິດ ໄດ້ເອົາ ມາຕການເດັດຂາດ, ກຳຈັດປັດເປົ່າ ກຸ່ມຄົນບໍ່ດີ ຂາຍຊາດ ຂາຍປະຊາຊົນ ແລະຕ້ານ ສາກົນ ລັກຂາຍ ແຮ່ທາຕ **ເບີໄຣສ໌** ຢ່າງຫລວງຫລາຍຄັ້ງນີ້ດ້ວຍ.

ຂໍຂອບໃຈ

ປະຊາຊົນມີໄຊ ເສຣີປະຊາທິປະໄຕອົງອາດ ຊາດລາວຈົ່ງຈເຣີນ.

ສູນກາງພັກເສຣີປະຊາທິປະໄຕລາວ
ຫ້ອງການປະທານພັກ

ທ່ານ ອາຈານ ສົມນຶກ ຟອງສຸວັນ

ລົງວັນທີ 15 ສິງຫາ 2018